  

# ພິທີມອບໃບປະກາສະນີຍະບັດໃຫ້ນັກຮຽນປີສຸດທ້າຍ ປີລິນຍາຕີ, ຊັ້ນສູງ ແລະ ຊັ້ນກາງ ປະຈຳສົກຮຽນ 2010 - 2011 ທີ່ ວິທະຍາໄລເຕັກນິກ ສັບພະວິຊາ

ວັນທີ 06 ກໍລະກົດ ປີ 2011, ເວລາ 9 : 00 ໂມງ ວິທະຍາໄລເຕັກນິກ ສັບພະວິຊາ ໄດ້ເປີດພິທີມອບໃບປະກາສະນີຍະບັດ ໃຫ້ນັກຮຽນປີສຸດທ້າຍ ປີລິນຍາຕີ, ຊັ້ນສູງ ແລະ ຊັ້ນກາງ ປະຈຳສົກຮຽນ 2010 - 2011 ໂດຍການເປັນກຽດເຂົ້າຮ່ວມຂອງທ່ານ ຮສ. ດຣ ກອງສີ ແສງມະນີ ລັດຖະມົນຕີຊ່ວຍວ່າການ ກະຊວງສຶກສາທິການ, ທ່ານ ບຸນສຸກ ທິລະສັກ ຫົວໜ້າຫ້ອງການ ກະຊວງສຶກສາທິການ, ມີຕາງໜ້າຈາກກະຊວງສຶກສາທິການ, ພ້ອມດ້ວຍແຂກຖືກເຊີນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ, ພິທີມອບໃບປະກາສະນີຍະບັດໃນຄັ້ງນີ້ ມີນັກສຶກສາທີ່ຮຽນຈົບ ປະລິນຍາຕີ 148 ຄົນ, ຊັ້ນສູງ 789 ຄົນ, ຊັ້ນກາງ 174 ຄົນ ລວມ 1111 ຄົນ ໃນນັ້ນມີນັກຮຽນດີເດັ່ນ 6 ຄົນ ຍິງ 2 ຄົນ, ທ່ານ ຮສ. ດຣ ກອງສີ ແສງມະນີ ລັດຖະມົນຕີຊ່ວຍວ່າການກະຊວງສຶກສາທິການ ໄດ້ຂຶ້ນກ່າວໃຫ້ຄຳເຫັນຕໍ່ວິທະຍາໄລເຕັກນິກ ສັບພະວິຊາ ແລະ ນັກສຶກສາຜູ້ທີ່ມາຮັບໃບປະກາດ, ເຊິ່ງໄດ້ເວົ້າເຖິງ 4 ບຸກທະລຸ ຄື: ບຸທະລຸຈິນຕະນາການ, ຊັບພະຍາກອນມະນຸດ, ລະບຽບຫຼັກການ ແລະ ບຸກທະລຸກ່ຽວກັບການແກ້ໄຂບັນຫາຄວາມທຸກຍາກ ໃຫ້ແກ່ປະຊາຊົນ, ຫຼັງຈາກໃຫ້ຄຳເຫັນແລ້ວ ທ່ານ ຮສ. ດຣ ກອງສີ ແສງມະນີ ລັດຖະມົນຕີຊ່ວຍວ່າການກະຊວງສຶກສາທິການ ໄດ້ເປັນກຽດມອບໃບປະກາສະນີຍະບັດໃຫ້ນັກສຶກສາໃນພິທີຄັ້ງນີ້ດ້ວຍ.